# ບົດລາຍງານສະຖິຕິເງິນຕາ
## ປະຈຳໄຕມາດ ທີ 4 ປີ 2021

ທະນາຄານແຫ່ງ ສປປ ລາວ

# ສາລະບານ


I. ສະພາບລວມ ....... 1

II. ອັດຕາເງິນເຟີ້ ....... 1

III. ຂະແໜງເງິນຕາ-ການເງິນ ....... 2

3.1. ນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ....... 2

3.2. ຖານເງິນຕາ ....... 3

3.3. ປະລິມານເງິນ ....... 3

3.4. ອັດຕາດອກເບ້ຍ ....... 4

3.5. ເງິນຝາກ ....... 5

3.6. ສິນເຊື່ອ ....... 5

3.7. ລະບົບສະຖາບັນການເງິນ-ເງິນຕາ ....... 6

IV. ດຸນການຊໍາລະກັບຕ່າງປະເທດ ....... 7

4.1. ດຸນການຊໍາລະລວມ ....... 7

4.2. ດຸນບັນຊີຊໍາລະປົກກະຕິ ....... 7

4.2.1 ດຸນການຄ້າດ້ານສິນຄ້າ ....... 8

4.3. ດຸນບັນຊີການເງິນ ....... 10

# ສາລະບານຮູບ

ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້ ........ 1
ຮູບທີ 2. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານໍາເຂົ້າ........ 2
ຮູບທີ 3. ການເໜັງຕີງຂອງອັດຕາແລກປ່ຽນ (ໄຕມາດທຽບໄຕມາດ)........ 3
ຮູບທີ 4. ໂຄງປະກອບຂອງຖານເງິນຕາ........ 3
ຮູບທີ 5. ການຂະຫຍາຍຕົວຂອງປະລິມານເງິນ M2........ 4
ຮູບທີ 6. ເງິນຝາກຂອງທະນາຄານທຸລະກິດ........ 5
ຮູບທີ 7. ການປະກອບສ່ວນຂອງສິນເຊື່ອ (ແຍກຕາມຂະແໜງການ)........ 6
ຮູບທີ 8. ດຸນການຊໍາລະກັບຕ່າງປະເທດ ........ 7
ຮູບທີ 9. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ........ 8
ຮູບທີ 10. ການສົ່ງອອກສິນຄ້າ ........ 9
ຮູບທີ 11. ການນໍາເຂົ້າສິນຄ້າ ........ 9
ຮູບທີ 12. ດຸນບັນຊີການເງິນ........10

# ສາລະບານຕາຕະລາງ


ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (Consumer Price Index) ....................11

ຕາຕະລາງທີ 2. ອັດຕາເງິນເຟີ້ (Inflation Rate) ....................12

ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (Balance Sheet of the BOL) ....................13

ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (Commercial Banks' Survey) ....................14

ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (Monetary Survey) ....................15

ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (Assets of Commercial Banks) ....................16

ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ (Official and Parallel Market Exchange Rate) ....................17

ຕາຕະລາງທີ 8. ອັດຕາດອກເບ້ຍສະເລ່ຍຂອງທະນາຄານທຸລະກິດ (Commercial Bank' Interest Rate) ....................18

ຕາຕະລາງທີ 9. ເງິນຝາກຂອງທະນາຄານທຸລະກິດ (Commercial Bank' Deposit) ....................19

ຕາຕະລາງທີ 10. ເງິນຝາກຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (Commercial Bank' Deposit by Bank Group) ....................20

ຕາຕະລາງທີ 11. ສິນເຊື່ອຂອງທະນາຄານທຸລະກິດ (Commercial Bank' Credit) ....................21

ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (Commercial Bank' Credit by Bank Group) ....................22

ຕາຕະລາງທີ 13. ດຸນການຊຳລະກັບຕ່າງປະເທດ (Balance Of Payments) ....................23

ຕາຕະລາງທີ 14. ການຄ້າຕ່າງປະເທດ (Foreign Trade) ....................25

ຕາຕະລາງທີ 15. ທີ່ຕັ້ງສຳນັກງານຂອງແຕ່ລະທະນາຄານທຸລະກິດ (List of Commercial Banks) ....................26

# ບົດນຳ

ໃນບົດລາຍງານສະຖິຕິເງິນຕາປະຈຳໄຕມາດ ແມ່ນການສັງລວມຂໍ້ມູນສະຖິຕິເງິນຕາ ຂອງຂະແໜງການທະນາຄານ ຊຶ່ງກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ໄດ້ເກັບກຳສັງລວມ ແລ້ວເຜີຍແຜ່ບົດລາຍງານສະຖິຕິເງິນຕານີ້ ທາງເວັບໄຊຂອງ ທຫລ ເພື່ອໃຫ້ສັງຄົມໄດ້ນຳໃຊ້ຕາມຄວາມຈຳເປັນ ແລະ ຕ້ອງການຂອງແຕ່ລະພາກສ່ວນ.

ເຖິງຢ່າງໃດກໍຕາມ, ມີບາງຂໍ້ມູນໃນບົດລາຍງານສະບັບນີ້ ຍັງເປັນຕົວເລກຄາດຄະເນເບື້ອງຕົ້ນ ແລະ ອາດມີການປັບປຸງຂໍ້ມູນຄືນ. ສະນັ້ນ, ຂ້າພະເຈົ້າຕາງໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍອະໄພມາຍັງທຸກໆທ່ານມານະທີ່ນີ້ດ້ວຍ. ພ້ອມນີ້, ຂໍຮັບເອົາຄຳຕິຊົມຕ່າງໆຈາກທ່ານຜູ້ຊົມໃຊ້ດ້ວຍຄວາມຈິງໃຈ ເພື່ອການປັບປຸງບົດລາຍງານສະຖິຕິເງິນຕາສະບັບຕໍ່ໄປ ໃຫ້ມີຄວາມສົມບູນຍິ່ງຂຶ້ນ.

**ຫົວໜ້າກົມນະໂຍບາຍເງິນຕາ**

# I. ສະພາບລວມ

ໃນໄຕມາດ 4 ຂອງປີ 2021, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສືບຕໍ່ດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍ ເປັນຕົ້ນແມ່ນສືບຕໍ່ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໃນລະດັບ 3% ຕໍ່ປີ, ຮັກສາອັດຕາສ່ວນເງິນແຮຝາກບັງຄັບ ໄວ້ໃນລະດັບ 3% ສຳລັບສະກຸນເງິນກີບ ແລະ 5% ສຳລັບສະກຸນເງິນຕາຕ່າງປະເທດ; ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ; ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວນັ້ນ, ອັດຕາເງິນເຟີ້ ຢູ່ໃນລະດັບ 5,01%, ອັດຕາແລກປ່ຽນເງິນກີບທຽບເງິນໂດລາສະຫະລັດ ອ່ອນຄ່າ 5,45%; ປະລິມານເງິນ (M2) ເພີ່ມຂຶ້ນ 9,27%; ເງິນຝາກຂອງທະນາຄານທຸລະກິດ ເພີ່ມຂຶ້ນ 8,66%; ສິນເຊື່ອຂອງທະນາຄານທຸລະກິດ ຂະຫຍາຍຕົວ 8,44%; ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າໄດ້ 3,86 ເດືອນ. ນອກຈາກນີ້, ດ້ານການຄ້າກັບຕ່າງປະເທດ ມີມູນຄ່າການຄ້າທັງໝົດ 3.443,49 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ, ການສົ່ງອອກ ມີມູນຄ່າ 1.877,25 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 3,19% ແລະ ການນຳເຂົ້າ ມີມູນຄ່າ 1.566,24 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 8,98% ທຽບໃສ່ໄຕມາດຜ່ານມາ.

# II. ອັດຕາເງິນເຟີ້

ອັດຕາເງິນເຟີ້ໃນໄຕມາດ 4 ຂອງປີ 2021 ຢູ່ໃນລະດັບ 5,01% ເພີ່ມຂຶ້ນຈາກລະດັບ 4,22% ໃນໄຕມາດ 3/2021. ປັດໄຈທີ່ເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນ ເມື່ອທຽບກັບໄຕມາດຜ່ານມາ ແມ່ນຍ້ອນການເພີ່ມຂຶ້ນຂອງລາຄາສິນຄ້າ (ທຽບກັບໄລຍະດຽວກັນຂອງປີຜ່ານມາ) ໃນໝວດຄົມມະນາຄົມ ແລະ ການຂົນສົ່ງ ເພີ່ມຂຶ້ນຢູ່ໃນລະດັບ 11,78% ຈາກ 6,80% ຍ້ອນການເພີ່ມຂຶ້ນສູງຂອງລາຄານ້ຳມັນພາຍໃນ ຕາມການເພີ່ມຂຶ້ນສູງຂອງລາຄານ້ຳມັນໃນຕະຫຼາດໂລກ ຊຶ່ງໃນໄຕມາດນີ້ມີການປັບຂຶ້ນລາຄານ້ຳມັນພາຍໃນ ຈຳນວນ 5 ຄັ້ງ. ນອກຈາກນີ້, ໝວດສິນຄ້າອື່ນກໍເພີ່ມຂຶ້ນ ເຊັ່ນ: ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນຢູ່ໃນລະດັບ 7,56% ຈາກ 5,59%, ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ ຢູ່ໃນລະດັບ 4,67% ຈາກ 3,96% ແລະ ໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ ຢູ່ໃນລະດັບ 5,21% ຈາກ 3,52%.

**ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ຮູບທີ 2. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# III. ຂະແໜງເງິນຕາ-ການເງິນ

## 3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ

ໃນໄຕມາດ 4 ຂອງປີ 2021, ທຫລ ໄດ້ສືບຕໍ່ດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍ ດ້ວຍການສືບຕໍ່ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໄວ້ໃນລະດັບ 3% ຕໍ່ປີ, ຮັກສາອັດຕາສ່ວນເງິນແຮຝາກບັງຄັບ ໄວ້ໃນລະດັບ 3% ສຳລັບສະກຸນເງິນກີບ ແລະ 5% ສຳລັບສະກຸນເງິນຕາຕ່າງປະເທດ, ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ກັດສິນແຫຼ່ງສຸດທ້າຍຢ່າງເປັນປົກກະຕິ.

ສຳລັບນະໂຍບາຍອັດຕາແລກປ່ຽນ, ທຫລ ໄດ້ສືບຕໍ່ຮັກສາຂອບການເໜັງຕີງອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ໃນລະດັບ ±1,50% ທຽບກັບອັດຕາແລກປ່ຽນອ້າງອີງຂອງ ທຫລ, ສືບຕໍ່ຮັກສາສ່ວນຕ່າງລະຫວ່າງອັດຕາຊື້-ຂາຍສຳລັບເງິນກີບທຽບກັບເງິນໂດລາສະຫະລັດ ບໍ່ເກີນ 0,50%, ເງິນກີບທຽບກັບເງິນບາດ ແລະ ກີບທຽບກັບເງິນເອີໂຣ ບໍ່ເກີນ 0,75% ແລະ 2% ສຳລັບເງິນຕາສະກຸນອື່ນໆ.

ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວນັ້ນ, ອັດຕາແລກປ່ຽນມີການເໜັງຕີງຄື: ອັດຕາແລກປ່ຽນສະເລ່ຍທົ່ວລະບົບ ເງິນກີບສະເລ່ຍຢູ່ໃນລະດັບ 11.149,82 ກີບ/ໂດລາສະຫະລັດ ແລະ 350,00 ກີບ/ບາດ. ໃນນີ້, ເງິນກີບອ່ອນຄ່າ 5,45% ທຽບເງິນໂດລາສະຫະລັດ ແລະ ອ່ອນຄ່າ 1,03% ທຽບກັບເງິນບາດ.

**ຮູບທີ 3. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.2. ຖານເງິນຕາ

ຮອດທ້າຍໄຕມາດ 4 ຂອງປີ 2021, ຖານເງິນຕາ ມີຍອດເຫຼືອ 40.010,56 ຕື້ກີບ, ເພີ່ມຂຶ້ນ 14,67% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 23,23% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ຖານເງິນຕາເພີ່ມຂຶ້ນໃນໄຕມາດນີ້ ແມ່ນຍ້ອນ ທຫລ ສືບຕໍ່ປ່ອຍສິນເຊື່ອ ເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19, ທຫລ ແກ້ໄຂສະພາບຄ່ອງໃຫ້ທະນາຄານທຸລະກິດ ແລະ ລັດຖະບານໃຊ້ຈ່າຍງົບປະມານ.

**ຮູບທີ 4. ໂຄງປະກອບຂອງຖານເງິນຕາ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.3. ປະລິມານເງິນ

ປະລິມານເງິນ (M2) ຮອດທ້າຍໄຕມາດ 4 ຂອງປີ 2021 ມີຍອດທັງໝົດ 138.724,30 ຕື້ກີບ, ເພີ່ມຂຶ້ນ 9,27% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 23,98% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍຍ້ອນກະແສເງິນລົງທຶນຈາກຕ່າງປະເທດ ຕົ້ນຕໍມາຈາກໂຄງການສ້າງທາງລົດໄຟລາວ-ຈີນ ບວກກັບທະນາຄານທຸລະກິດບາງແຫ່ງໄດ້ປັບປຸງໂຄງສ້າງການຈັດຕັ້ງຂອງຕົນ ແລະ ໄດ້ສະໜອງສິນເຊື່ອເຂົ້າໃນລະບົບເສດຖະກິດຫຼາຍຂຶ້ນ. ນອກຈາກນີ້, ການຂະຫຍາຍຕົວຂອງປະລິມານເງິນ (M2) ແມ່ນໄດ້ຮັບຜົນກະທົບຈາກການອ່ອນຄ່າຂອງເງິນກີບເມື່ອທຽບກັບເງິນໂດລາສະຫະລັດ.

ອົງປະກອບຂອງປະລິມານເງິນ (M2) ປະກອບມີ: ເງິນຝາກເປັນສະກຸນເງິນກີບ ກວມເອົາ 38,09%, ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ກວມເອົາ 54,35% ແລະ ເງິນຢູ່ນອກລະບົບທະນາຄານ ກວມເອົາ 7,56%.

**ຮູບທີ 5. ການຂະຫຍາຍຕົວຂອງປະລິມານເງິນ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການປະກອບສ່ວນຕໍ່ການຂະຫຍາຍຕົວຂອງ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ

## 3.4. ອັດຕາດອກເບ້ຍ

ໃນໄຕມາດນີ້, ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງທະນາຄານທຸລະກິດ ມີການປ່ຽນແປງເລັກໜ້ອຍ. ໃນນີ້, ອັດຕາດອກເບ້ຍເງິນຝາກມີກຳນົດ 12 ເດືອນ ສະກຸນເງິນກີບ ຫຼຸດລົງຈາກ 5,33% ມາເປັນ 5,29%, ສະກຸນເງິນບາດ ຈາກ 3,47% ມາເປັນ 3,38% ແລະ ສະກຸນເງິນໂດລາສະຫະລັດ ຈາກ 3,73% ມາເປັນ 3,71%. ພ້ອມດຽວກັນນັ້ນ, ອັດຕາດອກເບ້ຍເງິນກູ້ຂອງທະນາຄານທຸລະກິດ ໄລຍະເວລາ 1 ປີ ສະກຸນເງິນກີບ ຫຼຸດລົງຈາກ 9,94% ມາເປັນ 9,83%, ສະກຸນເງິນບາດ ຫຼຸດລົງຈາກ 8,50% ມາເປັນ 8,35% ແລະ ສະກຸນເງິນໂດລາສະຫະລັດ ຫຼຸດລົງຈາກ 8,14% ມາເປັນ 8,06%.

**ຮູບທີ 6. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ເງິນຝາກ

ເງິນຝາກຂອງທະນາຄານທຸລະກິດ (ບໍ່ລວມເງິນຝາກຂອງຜູ້ມີຖິ່ນຖານຢູ່ຕ່າງປະເທດ) ຮອດທ້າຍໄຕມາດ 4 ຂອງປີ 2021 ມີຍອດທັງໝົດ 128.149,93 ຕື້ກີບ, ເພີ່ມຂຶ້ນ 8,66% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 25% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ເງິນຝາກເປັນສະກຸນເງິນກີບ ເພີ່ມຂຶ້ນ 4,09%, ກວມເອົາ 41,17% ຂອງເງິນຝາກທັງໝົດ ແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 12,09%, ກວມເອົາ 58,83% ຂອງເງິນຝາກທັງໝົດ.

**ຮູບທີ 7. ເງິນຝາກຂອງທະນາຄານທຸລະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.6. ສິນເຊື່ອ

ສິນເຊື່ອຂອງທະນາຄານທຸລະກິດ ຮອດທ້າຍໄຕມາດ 4 ຂອງປີ 2021 ມີຍອດທັງໝົດ 87.298,64 ຕື້ກີບ, ຂະຫຍາຍຕົວເພີ່ມຂຶ້ນ 8,44% ແລະ ເພີ່ມຂຶ້ນ 11,58% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນັ້ນ, ສິນເຊື່ອທີ່ສະໜອງໃຫ້ຂະແໜງສະໜອງວັດຖຸ ແລະ ເຕັກນິກ ຂະຫຍາຍຕົວ 235,94%, ຂະແໜງການບໍລິການ 10,01%, ຂະແໜງຂົນສົ່ງ 9,64%, ຂະແໜງການຄ້າ 9,22%, ຂະແໜງຫັດຖະກຳ 7,27%, ຂະແໜງກໍ່ສ້າງ

6,09%, ຂະແໜງອຸດສາຫະກຳ 3,83% ແລະ ຂະແໜງກະສິກຳ 3,76%. ໃນໄຕມາດນີ້, ສິນເຊື່ອ (ແຍກຕາມຂະແໜງການ) ທີ່ປະກອບສ່ວນຕໍ່ການຂະຫຍາຍຕົວຂອງສິນເຊື່ອທັງໝົດ ປະກອບມີ: ຂະແໜງສະໜອງວັດຖຸ ແລະ ເຕັກນິກ 2,30%, ຂະແໜງການຄ້າ 1,74%, ຂະແໜງບໍລິການ 1,44%, ຂະແໜງອຸດສາຫະກຳ 1,08%, ຂະແໜງກໍ່ສ້າງ 0,85%, ຂະແໜງການອື່ນໆ[1] 0,73% ແລະ ຂະແໜງກະສິກຳ 0,30%.

**ຮູບທີ 8. ການປະກອບສ່ວນຂອງສິນເຊື່ອ ແຍກຕາມຂະແໜງການ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.7. ລະບົບສະຖາບັນການເງິນ-ເງິນຕາ

ທຫລ ໄດ້ແນໃສ່ເສີມຂະຫຍາຍປະສິດທິພາບການເຮັດວຽກຂອງທະນາຄານຂອງລັດ. ໃນນັ້ນ, ໄດ້ປັບໂຄງສ້າງທະນາຄານຂອງລັດ 2 ແຫ່ງຄື: ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ ໂດຍໃຫ້ພາກເອກະຊົນຖືຮຸ້ນ 70 ສ່ວນຮ້ອຍ ແລະ ພາກລັດຖືຮຸ້ນ 30 ສ່ວນຮ້ອຍ.

ຮອດທ້າຍໄຕມາດ 4 ຂອງປີ 2021, ລະບົບສະຖາບັນການເງິນ-ເງິນຕາ ປະກອບມີທະນາຄານທຸລະກິດ ຈຳນວນ 44 ແຫ່ງ (ຕາຕະລາງທີ 15), ມີ 114 ສາຂາຂອງທະນາຄານທຸລະກິດ, 541 ໜ່ວຍບໍລິການ, 34 ໜ່ວຍແລກປ່ຽນເງິນຕາ, ຕູ້ ATM 1.416 ໜ່ວຍ, ເຄື່ອງຮູດບັດ EDC ຈຳນວນ 4.596 ເຄື່ອງ ຢູ່ໃນຂອບເຂດທົ່ວປະເທດ ແລະ ບັດ ATM ຈຳນວນ 1.833.499 ບັດ. ໃນນັ້ນ, ທົ່ວລະບົບທະນາຄານທຸລະກິດ ມີຍອດຊັບສິນທັງໝົດ 208.542,01 ຕື້ກີບ, ເພີ່ມຂຶ້ນ 11,92%; ຍອດເງິນຝາກທັງໝົດ (ບໍ່ລວມເງິນຝາກຂອງຜູ້ມີຖິ່ນຖານຢູ່ຕ່າງປະເທດ) 128.149,93 ຕື້ກີບ, ເພີ່ມຂຶ້ນ 8,66%. ນອກຈາກນີ້, ທະນາຄານທຸລະກິດໄດ້ປະກອບສ່ວນຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວ ຊຶ່ງສິນເຊື່ອໃຫ້ພາກສ່ວນເສດຖະກິດ ມີຍອດທັງໝົດ 87.298,64 ຕື້ກີບ, ເພີ່ມຂຶ້ນ 8,44%. ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ມີທັງໝົດ 217 ແຫ່ງ, ເພີ່ມຂຶ້ນ 4 ແຫ່ງ. ໃນນັ້ນ, ມີສະຖາບັນການເງິນທີ່ຮັບຝາກ 20 ແຫ່ງ, ສະຖາບັນການເງິນທີ່ບໍ່ຮັບຝາກ 94 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 35 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 28 ແຫ່ງ ແລະ ໂຮງຊວດຈຳ 40 ແຫ່ງ.

ສຳລັບວຽກງານຕະຫຼາດຫຼັກຊັບ, ຮອດທ້າຍໄຕມາດທີ 4 ຂອງປີ 2021, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ມີທັງໝົດ ຈຳນວນ 11 ບໍລິສັດ. ຊຶ່ງດັດຊະນີຕະຫຼາດຫຼັກຊັບລາວໃນໄຕມາດນີ້ ປິດຢູ່ທີ່ 590,83 ຈຸດ, ຫຼຸດລົງ 8,75% ທຽບໃສ່ໄຕມາດຜ່ານມາ. ໃນນີ້, ມີປະລິມານການຊື້-ຂາຍຮຸ້ນທັງໝົດ 2,83 ລ້ານຮຸ້ນ ແລະ ມີມູນຄ່າການ

[1] ຂະແໜງການອື່ນໆປະກອບມີ: ຂະແໜງຂົນສົ່ງ, ຂະແໜງຫັດຖະກຳ ແລະ ຂະແໜງອື່ນໆ.

ຊື້-ຂາຍທັງໝົດ 12,43 ຕື້ກີບ, ຫຼຸດລົງ 17,52% ທຽບໃສ່ໄຕມາດຜ່ານມາ ຊຶ່ງການຊື້-ຂາຍດັ່ງກ່າວສ່ວນໃຫຍ່ເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ຊື້ຂາຍປ່ຽນມືກັນເອງ. ໃນນັ້ນ, ມູນຄ່າການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ກວມອັດຕາສ່ວນ 42,19% ຂອງມູນຄ່າການຊື້-ຂາຍຮຸ້ນທັງໝົດ. ສາເຫດທີ່ມູນຄ່າການຊື້-ຂາຍຮຸ້ນທັງໝົດຫຼຸດລົງໃນໄຕມາດນີ້ ຕົ້ນຕໍແມ່ນມາຈາກການຫຼຸດລົງຂອງມູນຄ່າການຊື້-ຂາຍ ແລະ ລາຄາຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ຊຶ່ງຫຼຸດລົງເຖິງ 50,85% ບວກກັບການຫຼຸດລົງຂອງລາຄາຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຮຸ້ນຂອງບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (PCD) ແລະ ຮຸ້ນຂອງບໍລິສັດລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ (LALCO).

# IV. ດຸນການຊຳລະກັບຕ່າງປະເທດ

## 4.1. ດຸນການຊຳລະລວມ

ດຸນຊຳລະກັບຕ່າງປະເທດ ປະຈຳໄຕມາດ 4 ຂອງປີ 2021, ດຸນລວມ ເກີນດຸນ 62,85 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ, ດຸນບັນຊີຊຳລະປົກກະຕິ ເກີນດຸນ 91,96 ລ້ານໂດລາສະຫະລັດທຽບເທົ່າ. ສ່ວນດຸນບັນຊີການເງິນມີກະແສເງິນໄຫຼເຂົ້າສຸດທິ 86,91 ລ້ານໂດລາສະຫະລັດທຽບເທົ່າ. ຮອດທ້າຍໄຕມາດ 4 ຂອງປີ 2021, ຄັງສຳຮອງເງິນຕາຕ່າງປະເທດ ມີຍອດເຫຼືອ 1.262,51 ລ້ານໂດລາສະຫະລັດ ແລະ ສາມາດກຸ້ມການນຳເຂົ້າສິນຄ້າໄດ້ 3,86 ເດືອນ[2].

**ຮູບທີ 9. ດຸນການຊຳລະກັບຕ່າງປະເທດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2. ດຸນບັນຊີຊຳລະປົກກະຕິ

ດຸນບັນຊີຊຳລະປົກກະຕິ ສືບຕໍ່ເກີນດຸນຢູ່ໃນລະດັບ 91,96 ລ້ານໂດລາສະຫະລັດທຽບເທົ່າ, ເກີນດຸນຫຼຸດລົງ 69,82% ທຽບໃສ່ໄຕມາດຜ່ານມາ. ສາເຫດຕົ້ນຕໍທີ່ເຮັດໃຫ້ດຸນບັນຊີຊຳລະປົກກະຕິ ເກີນດຸນຫຼຸດລົງແມ່ນຍ້ອນດຸນ

[2] ມູນຄ່າສິນຄ້ານຳເຂົ້າສະເລ່ຍຕໍ່ເດືອນໃນປີ 2021 ແມ່ນນຳໃຊ້ 326,56 ລ້ານໂດລາສະຫະລັດ (ຕົວເລກຄາດຄະເນ) ຊຶ່ງບໍ່ລວມການນຳເຂົ້າສິນຄ້າທີ່ມີແຫຼ່ງທຶນຮອງຮັບຢູ່ຕ່າງປະເທດ. ໃນນັ້ນ, ລວມມີສິນຄ້າທີ່ໄດ້ຮັບນະໂຍບາຍການສົ່ງເສີມການລົງທຶນ ປະກອບດ້ວຍລະຫັດເສຍພາສີຫຼຸດຜ່ອນຕາມນະໂຍບາຍສົ່ງເສີມການລົງທຶນ; ເສຍພາສີ, ຍົກເວັ້ນອາກອນ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມການລົງທຶນ; ຍົກເວັ້ນອາກອນມູນຄ່າເພີ່ມ, ເສຍພາສີ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມລົງທຶນ ແລະ ອື່ນໆ.

ການຄ້າດ້ານສິນຄ້າ ເກີນດຸນຫຼຸດລົງ 38,04% ທຽບໃສ່ໄຕມາດຜ່ານມາ ບວກກັບລາຍຮັບຂັ້ນໜຶ່ງ ຂາດດຸນເພີ່ມຂຶ້ນທຽບໃສ່ໄຕມາດຜ່ານມາ.

**ຮູບທີ 10. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

### 4.2.1 ດຸນການຄ້າດ້ານສິນຄ້າ

ດຸນການຄ້າດ້ານສິນຄ້າ ເກີນດຸນຢູ່ໃນລະດັບ 311,01 ລ້ານໂດລາສະຫະລັດທຽບເທົ່າ, ເກີນດຸນຫຼຸດລົງ 38,04% ທຽບໃສ່ໄຕມາດຜ່ານມາ. ສາເຫດຕົ້ນຕໍທີ່ເຮັດໃຫ້ດຸນການຄ້າດ້ານສິນຄ້າ ເກີນດຸນຫຼຸດລົງແມ່ນຍ້ອນການສົ່ງອອກສິນຄ້າ ຫຼຸດລົງ 3,19% ຈາກເພີ່ມຂຶ້ນ 5,29% ໃນໄຕມາດຜ່ານມາ ໃນຂະນະທີ່, ການນຳເຂົ້າສິນຄ້າ ກໍເພີ່ມຂຶ້ນ 8,98% ຈາກຫຼຸດລົງ 7,29% ໃນໄຕມາດຜ່ານມາ.

**ການສົ່ງອອກສິນຄ້າ:** ມີມູນຄ່າ 1.939,19 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 3,19% ທຽບໃສ່ໄຕມາດຜ່ານມາ, ແຕ່ເພີ່ມຂຶ້ນ 9,87% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການສົ່ງອອກຫຼຸດລົງແມ່ນມາຈາກການຫຼຸດລົງຂອງການສົ່ງອອກໄຟຟ້າ; ຜະລິດຕະພັນຕັດຫຍິບ ແລະ ເຄື່ອງຫັດຖະກຳ; ຜະລິດຕະພັນພຣາສະຕິກ ແລະ ຢາງພາລາ; ຜະລິດຕະພັນຈາກສັດ ແລະ ຜະລິດຕະພັນອື່ນໆ. ສິນຄ້າສົ່ງອອກຫຼັກໃນໄຕມາດນີ້ປະກອບມີ: ໄຟຟ້າ ກວມເອົາ 27,84%; ຮອງລົງມາແມ່ນຜະລິດຕະພັນບໍ່ແຮ່ ກວມເອົາ 23,60%; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 11,84%; ຜະລິດຕະພັນກະສິກຳ ກວມເອົາ 11,51%; ຜະລິດຕະພັນອື່ນໆ ກວມເອົາ 6,81%; ຜະລິດຕະພັນພຣາສະຕິກ ແລະ ຢາງພາລາ ກວມເອົາ 5,87% ແລະ ອາຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ກວມເອົາ 5,45% ຂອງການສົ່ງອອກທັງໝົດ.

**ຮູບທີ 11. ການສົ່ງອອກສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການນຳເຂົ້າສິນຄ້າ:** ມີມູນຄ່າ 1.566,24 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 8,98% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 5% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການນຳເຂົ້າເພີ່ມຂຶ້ນແມ່ນມາຈາກການເພີ່ມຂຶ້ນຂອງການນຳເຂົ້າອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ; ນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ; ຍານພະຫະນະ ແລະ ອຸປະກອນກ່ຽວຂ້ອງ; ຜະລິດຕະພັນອື່ນໆ; ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ແລະ ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ. ສິນຄ້ານຳເຂົ້າຫຼັກໃນໄຕມາດນີ້ໄດ້ແກ່: ອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ ກວມເອົາ 15,79%; ຮອງລົງມາແມ່ນ ນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ ກວມເອົາ 14,27%; ຍານພະຫະນະ ແລະ ອຸປະກອນກ່ຽວຂ້ອງ ກວມເອົາ 14,18%; ຜະລິດຕະພັນອື່ນໆ ກວມເອົາ 11,17%; ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ກວມເອົາ 9,12%; ເຄື່ອງຈັກ ແລະ ອຸປະກອນ ກວມເອົາ 8,59% ແລະ ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 7,54% ຂອງການນາເຂົ້າທັງໝົດ.

**ຮູບທີ 12. ການນຳເຂົ້າສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.3. ດຸນບັນຊີການເງິນ

ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າສຸດທິ 86,91 ລ້ານໂດລາສະຫະລັດທຽບເທົ່າ ຈາກທີ່ມີກະແສເງິນໄຫຼອອກສຸດທິ 77,18 ລ້ານໂດລາສະຫະລັດທຽບເທົ່າ ໃນໄຕມາດຜ່ານມາ. ສາເຫດຕົ້ນຕໍແມ່ນຍ້ອນການລົງທຶນອື່ນໆ ມີກະແສເງິນໄຫຼເຂົ້າສຸດທິ 104,31 ລ້ານໂດລາສະຫະລັດທຽບເທົ່າ ຈາກທີ່ມີກະແສເງິນໄຫຼອອກສຸດທິ 436,13 ລ້ານໂດລາສະຫະລັດທຽບເທົ່າ ໃນໄຕມາດຜ່ານມາ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ມີກະແສເງິນໄຫຼເຂົ້າສຸດທິ 208,09 ລ້ານໂດລາສະຫະລັດທຽບເທົ່າ. ການລົງທຶນໂດຍກົງຈາກຕ່າງປະເທດໃນໄຕມາດນີ້, ຂະແໜງທີ່ກວມອັດຕາສ່ວນການລົງທຶນຫຼາຍກວ່າໝູ່ ຕົ້ນຕໍແມ່ນຂະແໜງໄຟຟ້າ ກວມເອົາ 35,56%; ຂະແໜງການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ ກວມເອົາ 25,70%; ຂະແໜງການກໍ່ສ້າງ ກວມເອົາ 19,66% ແລະ ຂະແໜງການເຄື່ອນໄຫວດ້ານອະສັງຫາລິມະຊັບ ກວມເອົາ 13,49% ຂອງການລົງທຶນໂດຍກົງຈາກຕ່າງປະເທດທັງໝົດ. ສໍາລັບປະເທດທີ່ມາລົງທຶນຫຼາຍທີ່ສຸດແມ່ນ ສປ. ຈີນ ກວມເອົາ 56,77%, ຮອງລົງມາແມ່ນຮົງກົງ ກວມເອົາ 21,40% ແລະ ໄທ ກວມເອົາ 18,45%.

**ຮູບທີ 13. ດຸນບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (Consumer Price Index)

| ໝວດສິນຄ້າ | ໄຕມາດ 4/2020 | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ 12 ໝວດສິນຄ້າ** | **114,43** | **114,02** | **116,37** | **119,18** | **120,16** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ** | **114,37** | **113,74** | **116,00** | **118,78** | **119,42** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **110,08** | **111,20** | **112,31** | **115,19** | **118,10** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ ແລະ ອາຫານສົດ** | **109,63** | **110,35** | **111,21** | **113,87** | **116,23** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 119,76 | 117,60 | 121,46 | 124,35 | 123,04 |
| 2. ໝວດເຫຼົ້າ ແລະ ຢາສູບ | 106,88 | 108,33 | 110,37 | 111,67 | 113,35 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 119,35 | 120,35 | 120,30 | 122,48 | 124,93 |
| 4. ໝວດທີ່ພັກອາໃສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງ | 105,70 | 106,50 | 107,33 | 109,21 | 111,21 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 111,56 | 112,61 | 113,01 | 115,05 | 116,92 |
| 6. ໝວດການຮັກສາສຸຂະພາບ | 110,50 | 110,95 | 111,08 | 114,02 | 118,72 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 111,13 | 113,12 | 114,29 | 118,26 | 124,22 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 110,74 | 111,64 | 112,31 | 112,86 | 113,30 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 104,57 | 105,07 | 104,96 | 105,53 | 106,19 |
| 10. ໝວດການສຶກສາ | 103,62 | 103,25 | 103,24 | 103,82 | 103,31 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 104,23 | 104,72 | 107,39 | 110,68 | 112,11 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 120,18 | 121,20 | 122,30 | 127,35 | 129,59 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ໝາຍເຫດ:** ທຽບຖານເດືອນ 12/2015 = 100

# ຕາຕະລາງທີ 2. ອັດຕາເງິນເຟີ້ (Inflation Rate)

| ໝວດສິນຄ້າ | ໄຕມາດ 4/2020 | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 |
|---|---|---|---|---|---|
| **ເງິນເຟີ້ລວມ** | **3,40** | **2,16** | **3,58** | **4,22** | **5,01** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ** | **3,56** | **2,22** | **3,19** | **3,92** | **4,42** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **1,87** | **1,91** | **3,90** | **5,13** | **7,28** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ ແລະ ອາຫານສົດ** | **2,25** | **1,88** | **3,10** | **4,39** | **6,02** |
| **ອັດຕາເງິນເຟີ້ແຕ່ລະໝວດສິນຄ້າ (%)** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 4,96 | 2,58 | 3,27 | 3,43 | 2,74 |
| 2. ໝວດເຫຼົ້າ ແລະ ຢາສູບ | 1,37 | 2,00 | 4,45 | 5,31 | 6,06 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 5,24 | 3,59 | 3,21 | 3,96 | 4,67 |
| 4. ໝວດທີ່ພັກອາໄສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 0,72 | 1,00 | 2,37 | 3,52 | 5,21 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 5,33 | 3,23 | 3,14 | 3,94 | 4,80 |
| 6. ໝວດການຮັກສາສຸຂະພາບ | 5,88 | 3,79 | 1,93 | 3,54 | 7,45 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 1,19 | 2,01 | 5,06 | 6,80 | 11,78 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 6,31 | 2,39 | 8,94 | 3,57 | 2,31 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 1,05 | 0,89 | 1,03 | 1,23 | 1,55 |
| 10. ໝວດການສຶກສາ | 0,72 | -0,04 | 1,59 | 0,87 | -0,30 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | -2,13 | -2,28 | 1,89 | 5,59 | 7,56 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 10,54 | 8,58 | 8,18 | 7,76 | 7,84 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ໝາຍເຫດ:** ທຽບຖານເດືອນ 12/2015 = 100

## ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (Balance Sheet of the BOL)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 4/2020 | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **11.575,93** | **11.118,55** | **10.383,96** | **9.844,50** | **11.796,28** |
| ຊັບສິນຕ່າງປະເທດ | 12.261,64 | 11.801,42 | 11.077,27 | 11.961,86 | 14.145,16 |
| ໜີ້ສິນຕ່າງປະເທດ | -685,71 | -682,87 | -693,31 | -2.117,36 | -2.348,88 |
| **ຊັບສິນພາຍໃນສຸດທິ** | **20.893,24** | **22.601,61** | **23.882,67** | **25.046,10** | **28.214,28** |
| **ສິນເຊື່ອພາຍໃນສຸດທິ** | **16.969,79** | **17.429,34** | **18.683,93** | **19.834,23** | **23.345,78** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 1.173,38 | 968,98 | 1.152,84 | 1.211,72 | 3.129,46 |
| ສິນເຊື່ອໃຫ້ລັດຖະບານ | 2.509,49 | 2.413,29 | 2.271,37 | 2.735,42 | 5.025,96 |
| ເງິນຝາກລັດຖະບານ | -1.336,11 | -1.444,31 | -1.118,53 | -1.523,70 | -1.896,50 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 6.242,90 | 6.285,73 | 6.308,88 | 6.478,29 | 6.907,50 |
| ສິນເຊື່ອໃຫ້ລັດວິສາຫະກິດ | 6.242,90 | 6.285,73 | 6.308,88 | 6.478,29 | 6.907,50 |
| ສິນເຊື່ອໃຫ້ສະຖາບັນການເງິນ | 9.553,51 | 10.174,63 | 11.222,21 | 12.144,22 | 13.308,82 |
| ພັນທະບັດທະນາຄານກາງ | -2.192,76 | -1.655,11 | -1.668,83 | -1.753,97 | -2.250,96 |
| ລາຍການອື່ນໆສຸດທິ | 6.116,22 | 6.827,38 | 6.867,58 | 6.965,84 | 7.119,46 |
| **ຖານເງິນຕາ** | **32.469,17** | **33.720,17** | **34.266,63** | **34.890,60** | **40.010,56** |
| ເງິນສົດຢູ່ນອກຈໍລະຈອນ | 12.195,01 | 12.110,77 | 11.551,69 | 11.936,99 | 13.386,49 |
| ເງິນຝາກ | 20.274,16 | 21.609,40 | 22.714,94 | 22.953,61 | 26.624,07 |
| ເງິນຝາກກະແສລາຍວັນ | 15.714,99 | 16.939,00 | 19.628,85 | 19.585,66 | 22.607,01 |
| ເງິນແຮຝາກບັງຄັບ | 4.093,95 | 4.363,73 | 2.752,00 | 2.881,72 | 3.420,32 |
| ທຶນຈົດທະບຽນຂອງ ທທກ | 403,24 | 252,15 | 242,50 | 407,59 | 512,10 |
| ເງິນຝາກຂອງພາກສ່ວນອື່ນໆ | 61,98 | 54,52 | 91,59 | 78,64 | 84,64 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (Commercial Banks' Survey)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 4/2020 | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-13.627,28** | **-10.979,41** | **-11.421,40** | **-7.354,95** | **-7.354,80** |
| ຊັບສິນຕ່າງປະເທດ | 14.142,70 | 18.306,62 | 18.957,89 | 23.232,45 | 23.609,84 |
| ໜີ້ສິນຕ່າງປະເທດ | -27.769,98 | -29.286,03 | -30.379,29 | -30.587,41 | -30.964,64 |
| **ຄັງສະສົມສຸດທິ** | **35.608,19** | **38.832,39** | **39.831,71** | **40.121,21** | **45.849,94** |
| ຄັງສະສົມ | 42.131,46 | 45.520,31 | 46.758,17 | 47.303,75 | 53.396,44 |
| ເງິນກູ້ຢືມຈາກ ທຫລ | -6.523,27 | -6.687,92 | -6.926,47 | -7.182,54 | -7.546,50 |
| **ສິນເຊື່ອໃຫ້ລັດຖະບານສຸດທິ** | 6.456,31 | 5.973,65 | 7.655,85 | 9.363,89 | 16.376,72 |
| ເປັນສະກຸນເງິນກີບ | 7.078,35 | 6.743,11 | 8.236,77 | 10.187,77 | 17.708,34 |
| ເປັນສະກຸນເງິນຕາຕ່າງປະເທດ | -622,03 | -769,46 | -580,91 | -823,87 | -1.331,62 |
| **ຊັບສິນພາຍໃນສຸດທິ (ຍົກເວັ້ນສິນເຊື່ອໃຫ້ລັດຖະບານ)** | **74.083,58** | **71.585,64** | **73.563,64** | **75.811,19** | **73.278,07** |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 78.237,87 | 76.948,82 | 78.272,81 | 80.506,90 | 87.298,64 |
| ເປັນສະກຸນເງິນຕາຕ່າງປະເທດ | 40.012,02 | 39.015,90 | 39.461,80 | 41.756,82 | 45.397,87 |
| ສິນເຊື່ອໃຫ້ພາກເອກະຊົນ | 72.301,32 | 71.291,31 | 72.399,89 | 74.558,97 | 79.963,20 |
| ເປັນສະກຸນເງິນຕາຕ່າງປະເທດ | 34.504,85 | 33.813,76 | 34.060,30 | 36.264,79 | 39.122,63 |
| ສິນເຊື່ອໃຫ້ພາກສ່ວນລັດວິສາຫະກິດ | 5.936,55 | 5.657,51 | 5.872,92 | 5.947,93 | 7.335,43 |
| ເປັນສະກຸນເງິນຕາຕ່າງປະເທດ | 5.507,17 | 5.202,14 | 5.401,50 | 5.492,03 | 6.275,24 |
| **ຊັບສິນອື່ນໆສຸດທິ** | **-4.154,29** | **-5.363,17** | **-4.709,17** | **-4.695,71** | **-14.020,57** |
| **ເງິນຝາກລູກຄ້າ** | **102.520,80** | **105.412,26** | **109.629,80** | **117.941,33** | **128.149,93** |
| ເປັນເງິນກີບ | 45.803,29 | 46.587,92 | 48.847,64 | 50.680,67 | 52.754,54 |
| ເປັນສະກຸນເງິນຕາຕ່າງປະເທດ | 56.717,50 | 58.824,34 | 60.782,17 | 67.260,66 | 75.395,39 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (Monetary Survey)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 4/2020 | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-2.051,35** | **139,13** | **-1.037,44** | **2.489,54** | **4.441,48** |
| ຊັບສິນຕ່າງປະເທດ | 26.404,34 | 30.108,03 | 30.035,16 | 35.194,31 | 37.755,01 |
| ໜີ້ສິນຕ່າງປະເທດ | -28.455,69 | -29.968,90 | -31.072,60 | -32.704,77 | -33.313,52 |
| **ຊັບສິນພາຍໃນສຸດທິ** | **113.946,36** | **114.071,65** | **119.086,09** | **124.463,16** | **134.282,81** |
| **ສິນເຊື່ອພາຍໃນ** | **92.110,46** | **90.177,18** | **93.390,38** | **97.560,80** | **113.712,31** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 7.629,69 | 6.942,63 | 8.808,69 | 10.575,61 | 19.506,18 |
| ສິນເຊື່ອໃຫ້ລັດຖະບານ | 11.270,65 | 11.819,08 | 12.821,25 | 14.823,34 | 25.026,42 |
| ເງິນຝາກລັດຖະບານ | -3.640,96 | -4.876,45 | -4.012,55 | -4.247,73 | -5.520,25 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 84.480,76 | 83.234,55 | 84.581,69 | 86.985,19 | 94.206,14 |
| ສິນເຊື່ອໃຫ້ລັດວິສາຫະກິດ | 12.179,44 | 11.943,24 | 12.181,80 | 12.426,22 | 14.242,93 |
| ສິນເຊື່ອໃຫ້ພາກເອກະຊົນ | 72.301,32 | 71.291,31 | 72.399,89 | 74.558,97 | 79.963,20 |
| ລາຍການອື່ນໆສຸດທິ | 21.835,91 | 23.894,47 | 25.695,71 | 26.902,36 | 20.570,50 |
| **ປະລິມານເງິນຕາມຄວາມໝາຍກວ້າງ** | **111.895,01** | **114.210,78** | **118.048,65** | **126.952,70** | **138.724,30** |
| **ປະລິມານເງິນຄວາມໝາຍແຄບ** | **15.310,12** | **14.732,46** | **14.726,21** | **15.352,59** | **17.740,61** |
| ເງິນຢູ່ນອກລະບົບທະນາຄານ | 9.312,24 | 8.744,01 | 8.327,26 | 8.932,73 | 10.489,79 |
| ເງິນຝາກກະແສລາຍວັນ | 5.997,88 | 5.988,44 | 6.398,94 | 6.419,86 | 7.250,82 |
| **ປະລິມານເງິນປະເພດອື່ນໆ** | **96.584,90** | **99.478,33** | **103.322,44** | **111.600,11** | **120.983,68** |
| ເງິນຝາກປະຢັດ ແລະ ຝາກມີກຳນົດ | 39.867,39 | 40.653,99 | 42.540,27 | 44.339,45 | 45.588,30 |
| ເງິນຝາກເປັນເງິນຕາຕ່າງປະເທດ | 56.717,50 | 58.824,34 | 60.782,17 | 67.260,66 | 75.395,39 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (Assets of Commercial Banks)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 4/2020 | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 |
|---|---|---|---|---|---|
| ທະນາຄານທຸລະກິດລັດ + ທະນາຄານສະເພາະກິດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **71.234,64** | **75.273,63** | **77.500,21** | **82.267,24** | **96.952,91** |
| ອັດຕາສ່ວນ (%) | 43,68 | 43,95 | 43,88 | 44,15 | 46,49 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 2,54 | 5,67 | 2,96 | 6,15 | 17,85 |
| ທະນາຄານຮ່ວມທຶນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **13.675,94** | **14.177,90** | **14.194,89** | **14.929,72** | **16.219,62** |
| ອັດຕາສ່ວນ (%) | 8,39 | 8,28 | 8,04 | 8,01 | 7,78 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | -2,18 | 3,67 | 0,12 | 5,18 | 8,64 |
| ທະນາຄານເອກະຊົນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **32.443,69** | **33.841,12** | **35.432,60** | **37.507,17** | **40.413,66** |
| ອັດຕາສ່ວນ (%) | 19,90 | 19,76 | 20,06 | 20,13 | 19,38 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 6,07 | 4,31 | 4,70 | 5,85 | 7,75 |
| ທະນາຄານສາຂາຕ່າງປະເທດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **45.717,19** | **47.997,70** | **49.475,94** | **51.632,49** | **54.955,82** |
| ອັດຕາສ່ວນ (%) | 28,04 | 28,02 | 28,02 | 27,71 | 26,35 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | -0,97 | 4,99 | 3,08 | 4,36 | 6,44 |
| ລວມທັງໝົດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **163.071,45** | **171.290,34** | **176.603,63** | **186.336,62** | **208.542,01** |
| ອັດຕາສ່ວນ (%) | 100,00 | 100,00 | 100,00 | 100,00 | 100,00 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 1,79 | 5,04 | 3,10 | 5,51 | 11,92 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ (Official and Parallel Market Exchange Rate)

| ໄຕມາດ/ປີ | ກີບ/ໂດລາສະຫະລັດ | | | ກີບ/ບາດ | | |
|---|---|---|---|---|---|---|
| | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ |
| ໄຕມາດ 4/2013 | 7.935,95 | 8.007,74 | **7.971,84** | 251,61 | 254,01 | **252,81** |
| ໄຕມາດ 1/2014 | 8.029,33 | 8.055,14 | **8.042,23** | 247,44 | 252,11 | **249,77** |
| ໄຕມາດ 2/2014 | 8.050,00 | 8.066,23 | **8.058,11** | 249,75 | 250,83 | **250,29** |
| ໄຕມາດ 3/2014 | 8.043,06 | 8.078,12 | **8.060,59** | 251,60 | 251,70 | **251,65** |
| ໄຕມາດ 4/2014 | 8.059,67 | 8.078,93 | **8.069,30** | 248,51 | 250,67 | **249,59** |
| ໄຕມາດ 1/2015 | 8.108,95 | 8.145,80 | **8.127,37** | 250,30 | 247,48 | **248,89** |
| ໄຕມາດ 2/2015 | 8.104,36 | 8.116,02 | **8.110,19** | 246,78 | 247,77 | **247,28** |
| ໄຕມາດ 3/2015 | 8.160,49 | 8.211,00 | **8.185,74** | 235,57 | 237,05 | **236,31** |
| ໄຕມາດ 4/2015 | 8.151,05 | 8.205,25 | **8.178,15** | 229,52 | 230,24 | **229,88** |
| ໄຕມາດ 1/2016 | 8.134,21 | 8.166,02 | **8.150,12** | 229,75 | 229,77 | **229,76** |
| ໄຕມາດ 2/2016 | 8.113,33 | 8.135,37 | **8.124,35** | 231,50 | 231,89 | **231,70** |
| ໄຕມາດ 3/2016 | 8.095,42 | 8.160,44 | **8.127,93** | 233,80 | 234,49 | **234,15** |
| ໄຕມາດ 4/2016 | 8.160,74 | 8.469,57 | **8.315,16** | 232,39 | 240,13 | **236,26** |
| ໄຕມາດ 1/2017 | 8.194,25 | 8.470,05 | **8.332,15** | 235,14 | 239,73 | **237,44** |
| ໄຕມາດ 2/2017 | 8.213,55 | 8.493,84 | **8.353,69** | 241,47 | 247,01 | **244,24** |
| ໄຕມາດ 3/2017 | 8.278,93 | 8.453,34 | **8.366,13** | 250,05 | 252,90 | **251,47** |
